ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມສຳມະນາທາງດ້ານວິຊາການ ກ່ຽວກັບວຽກງານປົກປ້ອງເງິນຝາກ




ໃນລະຫວ່າງວັນທີ 28-29 ພະຈິກ 2023 ນີ້, ທີ່ໂຮງແຮມເມືອງແທງ ລັກເຊີຣີ ນະຄອນຫຼວງວຽງຈັນ, ສຳນັກງານປົກປ້ອງເງິນຝາກ (ສປງ) ໄດ້ຈັດກອງປະຊຸມສຳມະນາທາງດ້ານວິຊາການກ່ຽວກັບວຽກງານປົກປ້ອງເງິນຝາກຂຶ້ນ ໂດຍການໃຫ້ກຽດເປັນປະທານຂອງທ່ານ ນ. ແສງດາວວີ ວົງຄຳຊາວ, ຫົວໜ້າສຳນັກງານປົກປ້ອງເງິນຝາກ, ຊຶ່ງມີຜູ້ເຂົ້າຮ່ວມຈາກບັນດາກົມພາຍໃນ ທຫລ, ຄະນະພະແນກ ແລະ ວິຊາການພາຍໃນ ສປງ ເຂົ້າຮ່ວມ 70 ກວ່າທ່ານ.

ໃນກອງປະຊຸມຄະນະຊ່ຽວຊານຈາກອົງກອນປະກັນເງິນໄພເງິນຝາກອິນໂດເນເຊຍໃຫ້ກຽດຖ່າຍທອດປະສົບການ ແລະ ແລກປ່ຽນບົດຮຽນກ່ຽວກັບວຽກງານປົກປ້ອງເງິນຝາກ ເວົ້າລວມ, ເວົ້າສະເພາະແມ່ນວຽກງານການ





ບັນຊີກ່ຽວກັບການດຳເນີນການຈ່າຍເງິນປົກປ້ອງໃຫ້ຜູ້ຝາກເງິນ; ວຽກງານໂຄສະນາກ່ຽວກັບວຽກງານປົກປ້ອງເງິນຝາກ; ຂັ້ນຕອນການກະກຽມສ້າງຮ່າງກົດໝາຍວ່າດ້ວຍປົກປ້ອງເງິນຝາກ ແລະ ຄວາມປອດໄພທາງດ້ານລະບົບໄອທີ.

ກອງປະຊຸມສຳມະນາດັ່ງກ່າວ ແມ່ນໄດ້ດຳເນີນເປັນເວລາ 2 ມື້, ດ້ວຍບັນຍາກາດອັນຟົດຟື້ນ, ມີການແລກປ່ຽນບົດຮຽນກັບບັນດາຊ່ຽວຊານຈາກປະກັນໄພເງິນຝາກອິນໂດເນເຊຍ ຢ່າງຫຼາກຫຼາຍ, ລົງເລິກ ຊຶ່ງເຮັດໃຫ້ກອງປະຊຸມດັ່ງກ່າວປິດລົງດ້ວຍຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

**ຂ່າວ-ພາບ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ**

*ຢູ່ເມືອງລາວ ໃຊ້ເງິນກີບລາວ*